**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1287/ກປ

ນະຄອນຫຼວງວຽງຈັນ, ວັນທີ 08 ພະຈິກ 2019

# ໜັງສືສະເໜີ

**ຮຽນ:** ທ່ານ ລັດຖະມົນຕີ ກະຊວງຍຸຕິທຳ.

**ເລື່ອງ:** ແຜນການສ້າງ ແລະ ປັບປຸງກົດໝາຍ ຂອງຂະແໜງກະສິກຳ ແລະ ປ່າໄມ້ (ແຕ່ປີ 2021-2025).

- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ດຳລັດຂອງລັດຖະບານ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກະຊວງຍຸຕິທຳ ເລກທີ 1123/ກຍ, ລົງວັນທີ 30 ສິງຫາ 2019;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 661/ກບນ, ລົງວັນທີ 06 ພະຈິກ 2019.

ກະຊວງກະສິກຳ ແລະ ປ່າໄມ້, ຂໍຖືເປັນກຽດຮຽນມາຍັງທ່ານ ຊາບວ່າ: ຜ່ານການຄົ້ນຄວ້າ ແລະ ທົບທວນຄືນ 08 ກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການກະສິກຳ ແລະ ປ່າໄມ້ (ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ, ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ, ກົດໝາຍວ່າດ້ວຍການປະມົງ, ກົດໝາຍວ່າດ້ວຍຊົນລະປະທານ ແລະ ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ) ເຫັນວ່າ: ສ່ວນໃຫຍ່ແມ່ນຍັງສອດຄ່ອງກັບສະພາບຕົວຈິງ ຂອງ ສປປ ລາວ, ແຕ່ກໍຍັງມີບາງກົດໝາຍທີ່ຈຳເປັນຕ້ອງໄດ້ຄົ້ນຄວ້າປັບປຸງ ພ້ອມນັ້ນກໍມີບາງບັນຫາທີ່ສຳຄັນ ແລະ ຈຳເປັນຕ້ອງໄດ້ຄົ້ນຄວ້າສ້າງເປັນກົດໝາຍ ເພື່ອສະເໜີເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ຊຶ່ງມີກົດໝາຍສ້າງໃໝ່ 01 ສະບັບ ແລະ ປັບປຸງ 03 ສະບັບ ດັ່ງນີ້:

| ລ/ດ | ຊື່ກົດໝາຍ | ໃໝ່ | ປັບປຸງ | ຄາດຄະເນ | ກົມຮັບຜິດຊອບ |
|---|---|---|---|---|---|
| 1 | ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ | | ✓ | ທ້າຍປີ 2022 | ກົມປ່າໄມ້ |
| 2 | ກົດໝາຍວ່າດ້ວຍການປະມົງ | | ✓ | ທ້າຍປີ 2022 | ກົມລ້ຽງສັດ ແລະ ການປະມົງ |
| 3 | ກົດໝາຍວ່າດ້ວຍສະຫະກອນ | ✓ | | ທ້າຍປີ 2023 | ກົມພັດທະນາຊົນນະບົດ ແລະ ສະຫະກອນ |
| 4 | ກົດໝາຍວ່າດ້ວຍກະສິກຳ | | ✓ | ທ້າຍປີ 2023 | ກົມປູກຝັງ |

ສຳລັບ ເຫດຜົນ ແລະ ຄວາມຈຳເປັນໃນການສ້າງ ແລະ ປັບປຸງກົດໝາຍ ລວມທັງ ຈຸດປະສົງ, ຜົນປະໂຫຍດທີ່ຈະໄດ້ຮັບ, ຊັບພະຍາກອນ ແລະ ກົນໄກການຈັດຕັ້ງປະຕິບັດ ບັນດາກົດໝາຍດັ່ງກ່າວ ໄດ້ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

ທອງພັດ ວົງມະນີ